**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

ເລກທີ 548 /ສຕສ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2026

# ແຈ້ງການ

**ເຖິງ:** ຜູ້ປົກຄອງ, ພະນັກງານ ແລະ ນັກສຶກສາທີ່ຮຽນຈົບຊັ້ນມັດທະຍົມຕອນປາຍ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຮັບສະໝັກສອບເສັງຄັດເລືອກເອົານັກສຶກສາເຂົ້າຮຽນ ທີ່ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສົກສຶກສາ 2026-2027.

- ອີງຕາມ ແຈ້ງການຂອງກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການສອບເສັງຄັດເລືອກນັກສຶກສາ ເຂົ້າຮຽນຢູ່ສະຖານການສຶກສາຊັ້ນສູງ ສະບັບເລກທີ 654/ສສກ, ລົງວັນທີ 23 ມິຖຸນາ 2026;
- ອີງຕາມ ແຜນຮັບນັກສຶກສາ ຂອງສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານສົກສຶກສາ 2026-2027.

ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຂໍແຈ້ງມາຍັງ ທ່ານ ເພື່ອຮັບຊາບກ່ຽວກັບການຈັດຕັ້ງ ສອບເສັງຄັດເລືອກເອົານັກສຶກສາ ເຂົ້າຮຽນທີ່ ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ລະບົບ ຊັ້ນສູງ, ປະລິນຍາຕີ ແລະ ປະລິນຍາຕີ ຕໍ່ເນື່ອງ, ສົກສຶກສາ 2026-2027 ລາຍລະອຽດດັ່ງນີ້:

1. ເປີດຮັບຄຳຮ້ອງ ເລີ່ມແຕ່ວັນທີ 03 ສິງຫາ -16 ກັນຍາ 2026 ໃນໂມງລັດຖະການ (08:30-16:00 ໂມງ);
2. ແນະນຳການສອບເສັງວັນທີ 17 ກັນຍາ 2026;
3. ສອບເສັງ : ວັນທີ 21 ກັນຍາ 2026;
4. ວິຊາທີ່ສອບເສັງ : ຄະນິດສາດ, ພາສາອັງກິດ ແລະ ພື້ນຖານຄອມພິວເຕີ;
5. ປະກາດຜົນການສອບເສັງ ວັນທີ 22 ກັນຍາ 2026.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ທີ່ມີຄວາມສົນໃຈ ເພື່ອຮັບຊາບໂດຍທົ່ວຖືງກັນ.

**ຫົວໜ້າສະຖາບັນ**

ປອ. ປະດັບໄຊ ໄຊຍະໂຄດ

<u>ໝາຍເຫດ</u>: ສະໝັກຜ່ານທາງອອນລາຍ ໂດຍສະແກນ QR Code

ແບບຟອມ | ສະຖານທີ່ | ຂໍ້ມູນເພີ່ມຕື່ມ | Facebook


ສອບຖາມຂໍ້ມູນເພີ່ມຕື່ມ:
ທ. ລັງລະນາ ໄຊຍະວົງສາ 020 99796665
ທ. ຂັນທະວີ ອຸດົມສຸກ 020 28140735